# ລ.ມ.ຕ ຊ່ວຍວ່າການກະຊວງການຕ່າງປະເທດ ໂອ້ລົມຕໍ່ພະນັກງານສື່ສິ່ງພິມພາສາຕ່າງປະເທດ

ໃນວັນທີ 4/4/08 ນີ້, ທ່ານ ພົງສະຫວັດ ບຸບຜາ, ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ໄດ້ໃຫ້ກຽດ ໂອ້ລົມຕໍ່ພະນັກງານສື່ມວນຊົນໜັງສືພິມ ພາສາຕ່າງປະເທດ ເນື່ອງໃນໂອກາດຄົບຮອບ 14 ປີ (7/4/1994 - 7/4/2008) ຂອງ ໜັງສືພິມ ວຽງຈັນທາຍ, ຢູ່ທີ່ສຳນັກງານໜັງສືພິມພາສາຕ່າງປະເທດ.

ເຂົ້າຮ່ວມຮັບຟັງການໂອ້ລົມ ມີຫົວໜ້າຄະນະອຳນວຍການ, ຄະນະບັນນາທິການ ແລະ ນັກຂ່າວຈາກ ໜັງສືພິມປະຊາຊົນ ແລະ ສື່ສິ່ງພິມຕ່າງໆອ້ອມຂ້າງສູນກາງເຂົ້າຮ່ວມທັງໝົດ 50 ກວ່າຄົນ. ໃນໂອກາດນີ້, ທ່ານ ພົງສະຫວັດ ບຸບຜາ ກໍ່ໄດ້ຍົກໃຫ້ເຫັນຄວາມຮູ້ຄວາມເຂົ້າໃຈກ່ຽວກັບວຽກງານການຕ່າງປະເທດຂອງພັກເຮົາ ແມ່ນ ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງທ່າອ່ຽງສາກົນ ແລະ ສະພາບການພາຍໃນຂອງປະເທດເຮົາ, ໂດຍສະເພາະແມ່ນການພັດທະນາເສດຖະກິດ - ສັງຄົມຂອງປະເທດເຮົາໄປຕາມທິດສັງຄົມນິຍົມ.

ພ້ອມນີ້, ທ່ານ ພົງສະຫວັດ ບຸບຜາ ກໍ່ໄດ້ຮຽກຮ້ອງໃຫ້ສື່ມວນຊົນລາວເອົາໃຈໃສ່ວຽກງານການຂ່າວທີ່ມີຈຸດສຸມ ແລະ ເພີ່ມທະວີການວິເຄາະວິໄຈ, ການສັງເກດຕີລາຄາສະພາບສາກົນ ແລະ ການປະຕິບັດແຜນຍຸດທະສາດແຜນງານ ຂອງລັດຖະບານທີ່ມີຢູ່ແລ້ວຕ້ອງມີການຈັດຕັ້ງປະຕິບັດໃຫ້ດີ ແລະ ບັນຫາອື່ນໆເພື່ອປະກອບສ່ວນເຂົ້າໃນພາລະກິດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງຂຶ້ນເລື້ອຍໆ.